ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 11 ຫາ 15 ກັນຍາ 2023



ເຕັກນິກການປູກຜັກແບບໄຮໂດໂປນິກ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ເຕັກນິກການປູກຜັກແບບໄຮໂດໂປນິກ

ຮຽບຮຽງໂດຍ: ນ. ສີອຳພອນ ໄຊຍະລາດ

ການປູກຜັກແບບໄຮໂດໂປນິກ ໝາຍເຖິງການປູກຜັກແບບບໍ່ໃຊ້ດິນ ແຕ່ຈະປູກດ້ວຍນ້ຳທີ່ປະສົມກັບທາດລະລາຍນ້ຳ ທີ່ມີທາດອາຫານແກ່ພືດ ເມື່ອຮາກສຳພັດກັບທາດລະລາຍກໍ່ສາມາດດູດສານອາຫານໄປນຳໃຊ້ໄດ້ໂດຍກົງ ເຊິ່ງສ່ວນໃຫຍ່ຈະໃຊ້ກັບການປູກຜັກສະຫຼັດ ແລະ ຜັກສວນຄົວ ເໝາະສຳລັບຄົນທີ່ມີພື້ນທີ່ໜ້ອຍ ຫຼື ຕ້ອງການປະຢັດພື້ນທີ່ ທີ່ໃຊ້ໃນການປູກ.

ອຸປະກອນທີ່ໃຊ້ໃນການປູກຜັກໄຮໂດໂປນິກ (Hydroponic) ລະບົບນ້ຳນິ້ງ ປະກອບມີ:

- ແນວພັນ
- ກອ່ງຢາງສຳລັບບົ່ມແກ່ນ
- ກ່ອງໂຟມປູກຜັກ
- ຜ້າຢາດຳ
- ຟອງນ້ຳ (ສຳລັບກ້າເບ້ຍ)
- ຖ້ວຍປູກ
- ຈອກຕວງປຸ່ຍ
- ທິດຊູ້ (ເຈ້ຍອານາໄມ)
- ຟັອກກີ້ສີດນ້ຳ
- ປຸ່ຍ A B
- ເຫຼັກເຈາະຮູໂຟມປູກ
- ທາດຮອງຟອງນ້ຳ

**1. ການກ້າເບ້ຍ**:

- ນຳກ່ອງຢາງ ຂະໜາດ 15 cm x 15 cm, ໃຊ້ທິດຊູ້ 2 ແຜ່ນວາງໃສ່ໃນກ່ອງ ແລ້ວໃຊ້ຟ໋ອກກີ້ສີດນ້ຳໃຫ້ຊຸ່ມ.
- ນຳແກ່ນຜັກທີ່ຈະປູກມາວາງລຽງໃສ່ເທິງທິດຊູ້ ໂດຍລຽງເປັນແຖວ ປິ່ນເບື້ອງທີ່ຈະອອກຮາກ ໃຫ້ໄປລວງດຽວກັນ ຈະປູກຫຼາຍ ຫຼື ໜ້ອຍແມ່ນຕາມຄວາມຕ້ອງການຂອງຜູ້ປູກ.
- ຈາກນັ້ນ, ໃຊ້ທິດຊູ້ 1-2 ແຜ່ນ ວາງປົກ, ສີດນ້ຳໃຫ້ຊຸ່ມແລ້ວປິດຝາ ປະໄວ້ອຸນຫະພູມຫ້ອງປົກກະຕິເປັນເວລາ 2 ຄືນ.





- ເມື່ອແກ່ນຜັກບົ່ມໄດ້ 02 ຄືນເຮົາຈະສັງເກດເຫັນຮາກແກ່ນຜັກແຕກອອກມາຈາກແກ່ນຜັກໃນເວລານີ້ເຮົາຈະສາມາດເລືອກໄດ້ວ່າຕົ້ນໃດທີ່ແຂງແຮງ ແລະ ບໍ່ແຂງແຮງ.
- ໃຊ້ເຫຼັກຄີບ ຫຼື ມືກໍໄດ້ຄີບເອົາແກ່ນທີ່ແຕກຮາກດີໃສ່ຟອງນ້ຳກ້າເບ້ຍ ຮູລະເມັດຈົນຄົບ, ໂດຍໃຫ້ແຊ່ຟອງນ້ຳສຳລັບກ້າເບ້ຍ ແລ້ວບີບໄລ່ອາກາດອອກກ່ອນນຳມາໃຊ້.
- ເມື່ອລຽງແກ່ນຜັກໃສ່ຟອງນ້ຳແລ້ວໆໃຫ້ນຳໄປລອຍໃນນ້ຳທຳມະດາ ເປັນເວລາ 07 ວັນ ສາມາດເອົາໄປວາງໄວ້ບ່ອນທີ່ມີແສງສ່ອງເຖິງ ຫຼື ໃນເຮືອນຮົ່ມກໍ່ໄດ້ (ໝາຍເຫດ: ນ້ຳທີ່ໃຊ້ປູກຜັກແບບໄຮໂດໂປນິກບໍ່ວ່າຈະເປັນນ້ຳທຳມະຊາດ ຫຼື ນ້ຳປະປາຄວນນຳມາຂັງໄວ້ 2-3 ເສຍກ່ອນຈຶ່ງນຳໄປໃຊ້).
- ຫຼັງຈາກລອຍໃນນ້ຳທຳມະດາຄົບ 07 ວັນ, ແມ່ນໃຫ້ປ່ຽນເປັນນ້ຳທີ່ປະສົມທາດອາຫານອີກ 07 ວັນ ຈຶ່ງຈະນຳໄປແຍກປູກໃນກ່ອງປູກ.



2. ການກຽມກ່ອງປູກ ແລະ ປະສົມທາດອາຫານ:
- ເມື່ອເບ້ຍຜັກທີ່ປູກໃສ່ຟອງນ້ຳໄດ້ປະມານວັນທີ 10 ໃຫ້ເລີ່ມກະກຽມກ່ອງປູກ: ໂດຍໃຊ້ຜ້າຢາງດຳຕັດໃຫ້ໄດ້ຂະໜາດ 84 ຊັງຕີແມັດ X 120 ຊັງຕີແມັດ, ມັດສອງດ້ານ ແລ້ວຄຸມຮອງໃສ່ໃນກ່ອງໂຟມປູກ.






- ກ່ອງປູກແມ່ນໃຊ້ຂະໜາດບັນຈຸປະມານ 24 ລິດ ຂະໜາດກ່ອງປູກກ້ວາງ 38,8 ຊັງຕີແມັດ x ຍາວ 53,8 ຊັງຕີແມັດ x ເລິກ 20, 7 ຊັງຕີແມັດ ເມື່ອຮອງດ້ວຍຜ້າຢາງດຳແລ້ວໃຫ້ໃສ່ນ້ຳເຄິ່ງກ່ອງກ່ອນ.
- ປະສົມທາດອາຫານໂດຍໃສ່ປຸ໋ຍ A ກ່ອນ ໃນປະລິມານ 70 ຊີຊີ ແລ້ວຄົນໃຫ້ທົ່ວ.
- ຈາກນັ້ນໃສ່ປຸ໋ຍ B ໃນປະລິມານ 70 ຊີຊີ ແລ້ວຄົນໃຫ້ທົ່ວ, ເຕີມນ້ຳໃສ່ກ່ອງອີກໃຫ້ເຫຼືອໄວ້ 1 ຂໍ້ມືແທກຈາກປາກກ່ອງລົງມາ.
- ເມື່ອສຳເລັດແລ້ວໃຊ້ຝາອັດກ່ອງໄວ້ບໍ່ໃຫ້ຕາກແດດລໍຖ້າປູກຜັກໃສເມື່ອຜັກຄົບ 14 ວັນ..







### 3. ການຍາຍເບຍຜັກລົງປູກໃນກອງປູກ:

- ເມື່ອເບ້ຍຜັກທີ່ປູກໃນຟອງນ້ຳຄົບ 14 ວັນ ໃຫ້ແຍກ ໂດຍຈີກຕາມຮ່ອງຂອງຟອງນ້ຳສຳລັບກ້າເບ້ຍໂດຍແຍກເປັນຕົ້ນໆ.
- ຈັບເບ້ຍຜັກທີ່ສ່ວນຮາກຕິດກັບຟອງນ້ຳ ໂດຍເອົາສ່ວນໃບສອດຂຶ້ນທາງກົ້ນຖ້ວຍປູກເພື່ອປ້ອງກັນການເສຍຫາຍຂອງຮາກ ຈາກນັ້ນນຳໄປລຽງໃສ່ຮູກ່ອງປູກໃຫ້ຄົບ.





- ເມື່ອນຳເບ້ຍຜັກລົງກ່ອງປູກ 1 ອາທິດໃຫ້ສັງເກດເບິ່ງນ້ຳໃນກ່ອງຖ້ານ້ຳລົດລົງໃຫ້ຕື່ມແຕ່ນ້ຳ ແລະ ໝັ່ນກວດກາເບິ່ງແມງໄມ້ທີ່ມາລົບກວນ.
- ຜັກທີ່ປູກໃນກ່ອງໄດ້ 15 ວັນ ສາມາດໃຫ້ປຸ໋ຍເພີ່ມທາງນ້ຳຕື່ມໄດ້ຫາກສັງເກດວ່າຜັກຈະເລີນເຕີບໂຕບໍ່ໄດ້ດີ ໂດຍໃສ່ໃນປະລິມານ 30 ຊີຊີ/ກ່ອງ ແຕ່ຖ້າຜັກຊຽວງາມຢູ່ແລ້ວກໍ່ບໍ່ຈຳເປັນໃສ່.



### 4. ການເກັບກ່ຽວ:

- ຜັກທີ່ປູກເທິງກ່ອງປູກ ນັບແຕ່ມື້ເອົາລົງກ່ອງປູກເວລາ 25 ວັນ ຈະສາມາດເກັບຜົນຜະລິດໄດ້ ການເກັບແມ່ນອາດໃຊ້ມີດຕັດຮາກ ຫຼື ໃຊ້ວິທີມ້ອນຮາກໄວ້ກັບຕົ້ນ ເຊິ່ງເປັນວິທີໆຈະຊ່ວຍເກັບຮັກສາຄວາມສົດໄວ້ໄດ້ດົນໃນເວລາທີ່ຍັງບໍ່ທັນໄດ້ກິນແມ່ນໃຫ້ແຊ່ນ້ຳໄວ້.

ສອບຖາມຂໍ້ມູນເພີ່ມເຕີມ: ທ່ານ ຈັນທະລັງສີ ຈຳປາແກ້ວມະນາ, ເມືອງ ທ່າແຕງ ແຂວງເຊກອງ ເບີໂທ: 020 7662 9446

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;